# ຄວາມຈິງກ່ຽວກັບອາຫານຈຳເປັນ

Take a Fresh Look
Basic Food

### ຂ້ອຍສາມາດມີວຽກເຮັດ ແລະ ຍັງໄດ້ຮັບອາຫານຈຳເປັນຢູ່ບໍ່?

ແມ່ນແລ້ວ. ຄອບຄົວຂອງທ່ານສາມາດມີລາຍໄດ້ສູງເຖິງ 200% ຂອງເສັ້ນຊີ້ນຳຄວາມທຸກຍາກຂອງລັດຖະບານກາງ ແລະ ມີເງື່ອນໄຂໄດ້ຮັບອາຫານຈຳເປັນ.

| ຂະໜາດຂອງຄອບຄົວ | ຂອບເຂດລາຍໄດ້ປະຈຳເດືອນ* |
|---|---|
| 1 | $2,510 |
| 2 | $3,407 |
| 3 | $4,303 |
| 4 | $5,200 |
| 5 | $6,097 |

*ຈຳນວນເງິນຖືກດັດແປງໃໝ່ໃນທຸກໆທຸກໆເດືອນເອໂປຣ

### ຂ້ອຍຕ້ອງມີເດັກນ້ອຍເພື່ອຈະມີເງື່ອນໄຂໄດ້ຮັບບໍ່?

ບໍ່. ຄອບຄົວທຸກໆຂະໜາດອາດຈະມີເງື່ອນໄຂທີ່ຈະໄດ້ຮັບອາຫານຈຳເປັນ.

### ຄົນອື່ນຜູ້ທີ່ຕ້ອງການອາຫານຈຳເປັນຫລາຍກວ່າຂ້ອຍເດ?

ມັນບໍ່ມີຂອບເຂດໃນຈຳນວນຄົນຜູ້ທີ່ມີເງື່ອນໄຂໄດ້ຮັບຜູ້ທີ່ສາມາດໄດ້ຮັບອາຫານຈຳເປັນ. ການຮັບເອົາອາຫານຈຳເປັນສຳລັບທ່ານ ແລະ ຄອບຄົວຂອງທ່ານຈະບໍ່ສະທ້ອນເຖິງຄວາມສາມາດຂອງຄົນອື່ນຄົນໃດຄົນນຶ່ງອີກທີ່ຈະໄດ້ຮັບການຊ່ວຍເຫລືອເຫລົ່ານີ້.

### ຂ້ອຍຕ້ອງເປັນປະຊາຊົນຄົນ U.S. ບໍ່?

ບໍ່. ເຖິງຢ່າງໃດກໍຕາມ, ຄົນເຂົ້າເມືອງທີ່ບໍ່ມີເອກສານຜູ້ທີ່ສອດຄ່ອງນຳກົດລະບຽບຂອງໂຄງການອັນເຈາະຈົງອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫລືອອາຫານ.

ການຮັບເອົາການຊ່ວຍເຫລືອອາຫານທີ່ຈຳເປັນຈະບໍ່ສະທ້ອນເຖິງສະພາບການເຂົ້າເມືອງຂອງຄົນໃດຄົນນຶ່ງນຳພະແນກສັນຊາດ ແລະ ການເຂົ້າເມືອງຂອງ U.S.

### ຂ້ອຍສາມາດເປັນເຈົ້າຂອງເຮືອນຂອງຂ້ອຍ ແລະ ລົດຄັນນຶ່ງ ແລະ ຍັງມີເງື່ອນໄຂໄດ້ຮັບບໍ່?

ແມ່ນ. ຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບອີງໃສ່ລາຍໄດ້,ຊັບສິນບັດແນວ ອື່ນທຸກໆຢ່າງເຊັ່ນວ່າລົດຍົນ, ບັນຊີເງິນເບັ້ຍບຳນານ, ເຮືອນຂອງທ່ານ ແລະ ຊັບສິນອື່ນໆຈະບໍ່ຖືກພິຈາລະນາໃສ່.

### ຂ້ອຍຕ້ອງໄດ້ໄປຫ້ອງການບໍ່ເພື່ອຈະຮ້ອງຂໍເອົາ?

ບໍ່.ທ່ານສາມາດຮ້ອງຂໍເອົາໄດ້ທາງອອນລາຍນ໌ໄດ້ທ washingtonconnection.orgຯ ໂຣໂດຍທາງໂທລະສັບ,ໂດຍບໍ່ຕ້ອງໄດ້ຍື່ນໃບຄຳຮ້ອງຂໍ,ໄດ້ທີ່ 1-877-501-2233 ຫລືຢູ່ຕາມຫ້ອງການບໍລິການຊຸມນຸມຊົນໄກ້ບ້ານທ່ານທີ່ສຸດ. ຊອກຫາຫ້ອງການ CSO ໄກ້ທີ່ສຸດໄດ້ທີ່ dshs.wa.gov/office-locations.

ແຟກຊ໌: 888-338-7410
ທີ່ຢູ່ໄປສະນີ:
DSHS Customer Service Contact Center
P.O. Box 11699
Tacoma, WA 98411-6699

### ເອກະສານຊະນິດໃດແດ່ທີ່ຂ້ອຍຈະຕ້ອງໄດ້ຫາມາໃຫ້?

ທ່ານຈະຕ້ອງໄດ້ສະເໜີໃຫ້ພວກເຮົາເບິ່ງເລກຄວາມປອດພັຍຂອງສັງຄົມຂອງທ່ານ,ຫລັກຖານຂອງເອກະລັກປະຈຳຕົວຂອງທ່ານແລະຫລັກຖານຂອງລາຍໄດ້ແລະລາຍຈ່າຍຂອງການອາສັຍຢູ່ສຳລັບຄອບຄົວທີ່ທ່ານຮ້ອງຂໍເອົາ. ຖ້າຕ້ອງການ,ພວກເຮົາສາມາດຊ່ວຍເຫລືອຊອກເອົາລາຍຣະອຽດທີ່ຕ້ອງການ.

### ບາງຄົນຈະໄດ້ຮັບພຽງແຕ່ $23 ຕໍ່ເດືອນເທົ່ານັ້ນ – ມັນຈະຄຸ້ມຄ່າບໍ່ທີ່ຈະຂໍເອົາ?

ບາງຄົນຈະໄດ້ຮັບການຊ່ວຍເຫລືອປະຈຳເດືອນຕ່ຳສຸດສຳລັບຄອບຄົວນຶ່ງ ຫລື ສອງຄົນ, ຊຶ່ງຈະແມ່ນ $23. ບຸກຄົນຜູ້ທີ່ໄດ້ຮັບຈຳນວນຕ່ຳສຸດສ່ວນຫລາຍແລ້ວຈະເກັບທ້ອນໄວ້ຫລາຍເດືອນເພື່ອຈະຄຸ້ມຄ່າເດີນທາງໄປຮ້ານຂາຍອາຫານການກິນ. ຄົນອື່ນຈະໃຊ້ການຊ່ວຍເຫລືອເພື່ອຈະຕື່ມໝາກໄມ້ ແລະ ຜັກສົດໃສ່ໃນງົບມານອາຫານຂອງເຂົາເຈົ້າ.

ຄົນສ່ວນຫລາຍໄດ້ຮັບການຊ່ວຍເຫລືອປະຈຳເດືອນທີ່ສູງກວ່າ.

ເພື່ອການຄິດຄຳນວນເບິ່ງໃນການຊ່ວຍເຫລືອປະຈຳເດືອນທີ່ທ່ານສາມາດໄດ້ຮັບ, ຈົ່ງໂທຣະສັບໄປຫາສາຍໂທຟຣີທີ່ເລກ 877-501-2233 ຫລື ແວ່ເຂົ້າເບິ່ງແວບໄຊທ໌ຂອງພວກເຮົາທ washingtonconnection.orgฯ

### ມີການຊ່ວຍເຫລືອເພີ້ມເຕີມແນວໃດອີກບໍ່ສຳລັບການໄດ້ຮັບອາຫານຈຳເປັນ?

ເມື່ອເວລາທ່ານໄດ້ຮັບອາຫານຈຳເປັນ,ທ່ານຈະມີສິດໄດ້ຮັບໂຄງການອື່ນ,ເຊັ່ນວ່າ:

- ໂຄງການຄາບອາຫານຢູ່ໂຮງຮຽນຟຣີຫລືລຸດຣາຄາ;ແລະ
- ໂຄງການຊ່ວຍເຫລືອເຄື່ອງບໍຣິໂພກພິເສດສຳລັບແມ່, ເດັກທາຣົກ ແລະ ເດັກນ້ອຍ.

### ຂ້ອຍສາມາດໄດ້ຮັບຄວາມຊ່ວຍເຫລືອນຳການຝຶກຝົນ ຫລື ການຊອກວຽກບໍ່?

- ແມ່ນແລ້ວ, ຖ້າຫາກວ່າທ່ານໄດ້ຮັບອາຫານຈຳເປັນ,ທ່ານສາມາດອາສາສະມັກສຳລັບໂຄງການວຽກງານ ແລະ ການຝຶກຝົນຂອງອາຫານຈຳເປັນ.
- BFET ເອົາການຊອກວຽກໃຫ້, ການຝຶກຝົນເຣື່ອງການຊອກວຽກ, ການບໍຣິການດ້ານການສຶກສາ, ການຝຶກຝົນວິຊາຊີບ, ແລະ ໂອກາດວຽກງານອື່ນໆໃຫ້ແກ່ບຸກຄົນຜູ້ທີ່ໄດ້ຮັບອາຫານຈຳເປັນ.

ອົງການຫລາຍໆບ່ອນຈະໃຫ້ຄວາມຊ່ວຍເຫລືອນຳການຂົນສົ່ງໄປມາ, ການຝາກລູກ, ຫລືແຫລ່ງຊ່ວຍເຫລືອອື່ນໆທີ່ສາມາດຊ່ວຍເຫລືອທ່ານທຳງານໄປສູ່ເປົ້າໝາຍວິຊາຊີບຂອງທ່ານ. ການບໍຣິການຈະຖືກເອົາໃຫ້ໂດຍຜ່ານໂຮງຮຽນຄອມມິວນິຕີຄອນເຫລດ ຫລື ຄອນເຫລດການຊ່າງ ແລະ/ຫລື ອົງການຕັ້ງຢູ່ຕາມຊຸມນຸມຊົນ ແລະ ກວມເອົາພາກສ່ວນວຽກງານ ແລະ ຂະແນງຂອງວິຊາຊີບກ້ວາງຂວາງຫລາຍຢ່າງ. ເພື່ອລາຍຣະອຽດເພີ້ມເຕີມຂອງການບໍຣິການຂອງໂຄງການ BFET, ເຂົ້າອອນລາຍນ໌ທີ່ dshs.wa.gov/BFET.

### ຖ້າຖືກອະນຸມັດ, ມັນຈະໃຊ້ເວລາດົນປານໃດທີ່ຈະໄດ້ຮັບການຊ່ວຍເຫລືອຂອງຂ້ອຍ?

- ໃນປະມານປານກາງ, ພວກເຮົາອະນຸມັດຄຳຮ້ອງສຳລັບຄອບຄົວທີ່ມີເງື່ອນໄຂໄດ້ຮັບໃນເວລາປະມານສອງອາທິດ.
- ເກືອບເຄິ່ງນຶ່ງຂອງຄຳຮ້ອງທັງໝົດໄດ້ຖືກອະນຸມັດໃນເວລາຕ່ຳກວ່າຫົກວັນ.
- ເມື່ອເວລາພວກເຮົາອະນຸມັດຄຳຮ້ອງຂໍສຳລັບອາຫານຈຳເປັນ, ການຊ່ວຍເຫລືອຈະກັບຄືນໄປຫາວັນທີຂອງໃບຄຳຮ້ອງ.

ສະຖາບັນແຫ່ງນີ້ເປັນຜູ້ໃຫ້ການບໍຣິການທີ່ ໃຫ້ໂອກາດເທົ່າທຽມ ກັນ.

Washington State
Department of Social & Health Services
Transforming lives

DSHS 22-1302 LA (Rev. 4/24) Laotian

ເພື່ອລາຍລະອຽດເພີ້ມເຕີມ:

**1-877-501-2233**

**washingtonconnection.org**